# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 11 ພຶສພາ 2008 ( 05-11-2008 )

## ຕິດຕໍ່ພົວພັນ:

**ຂໍ້ພຣະຄັມພີໃນບົດຮຽນ:** (ພຣະບັນຍັດສອງ 6:4-9; 2 ຊາມູເອນ 14:23-24, 28-33; ສຸພາສິດ 4:3-6)

**ຄໍາຖາມແຫ່ງຊີວິດ:** ເປັນຫຍັງການພົວພັນຈຶ່ງສໍາຄັນຕໍ່ຄວາມສັມພັນອັນດີ?

**ຄວາມຈິງໃນພຣະຄັມພີ:** ການຕັ້ງໃຈທີ່ຈະຕິດຕໍ່ພົວພັນກັບຄົນອື່ນກ່ຽວກັບພຣະເຈົ້າ ແລະທາງຂອງພຣະອົງ ຊ່ອຍສ້າງສາຍສັມພັນ ແລະຫລີກເວັ້ນການເຮັດຜິດຕໍ່ກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃນການສ້າງສາຍສັມພັນທີ່ໝັ້ນຄົງຢ່າງແທ້ຈິງໂດຍ:

- ການໄຈ້ແຍກເຫດຜົນຕ່າງ ໆໃນສາຍັມພັນຂອງຄົນທີ່ໄຄ່ວເຂວ ຫລືຂາດໃນການຕິດຕໍ່ພົວພັນຊຶ່ງກັນ ແລະກັນ, ແລະ
- ຕັດສິນໃຈເລືອກເອົາສາຍສັມພັນອັນນຶ່ງທີ່ທ່ານຊອກຊ່ອງທາງໃນການຕິດຕໍ່ພົວພັນເລື້ອຍ ໆ ກ່ຽວກັບພຣະເຈົ້າ ແລະເສັ້ນທາງຕ່າງ ໆຂອງພຣະອົງ..

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນໍາ:</u>**

- ບາງຄັ້ງການພົວພັນກັບຍາດພີ່ນ້ອງກໍເປັນການຍາກທີ່ຈະເຮັດໃຫ້ສາຍສໍາພັນໝັ້ນຄົງ. ແມ່ນຫຍັງທີ່ເປັນສາເຫດໃຫ້ຄົນເຮົາອຶດອັດ ຫລືພົວພັນຕໍ່ກັບແລະກັນ? ຈະແກ້ໄຂໃນການຕິດຕໍ່ພົວພັນໃຫ້ດີຂຶ້ນໄດ້ຢ່າງໃດ?
- ບົດຮຽນນີ້ຈະຊ່ອຍທ່ານໃຫ້ປັບປຸງແກ້ໄຂການຕິດຕໍ່ພົວພັນ ແລະມີຄວາມສັມພັນທີ່ດີຂຶ້ນໄດ້.
- ໃຫ້ນັກຮຽນເປີດພຣະຄັມພີພຣະບັນຍັດສອງບົດທີ 6.

## 1. ຕິດຕໍ່ພົວພັນ -ຕົວຢ່າງຂອງເບື້ອງເທິງ ແລະການຍົກຍໍສັຣເສີນ:  ( ພຣະບັນຍັດສອງ 6:4-9)

- ຂໍໃຫ້ນັກຮຽນອາສາສມັກອ່ານ  (ພຣະບັນຍັດສອງ 6:4-9)
- ເລົ່າເຣື່ອງຂອງເວັນດີຈາກປື້ມອະທິບາຍພຣະຄັມພີ (ໃນບົດນໍາ ໜ້າ 121) ແລ້ວຖາມນັກຮຽນວ່າ ຢູ່ໃນບ້ານເຂົາເຈົ້າໄດ້ເວົ້າເຣື່ອງພຣະເຈົ້າຫລາຍປານໃດ.
- ປັບປຸງການພົວພັນຂອງທ່ານໃຫ້ຊໍານານໃນຄວາມສັມພັນ
- ໃນພຣະທັມພຣະບັນຍັດສອງ 6:4-9 ຊຶ່ງເປັນຕົວຢ່າງຈາກນັກທັມ ແລະເປັນການຊັກຊວນແນະນໍາເຣື່ອງ ການພົວພັນກັບຄົນໃນຄອບຄົວ. ໃຫ້ທໍາຕາມທີ່ພຣະເຈົ້າຊົງບອກໃຫ້ທໍາ ແລະທໍາດ້ວຍຄວາມເຊື່ອໄວ້ວາງໃຈ, ໃຫ້ພຍາຍາມຕິດຕໍ່ພົວພັນກັບລູກຂອງພວກເຮົາທຸກຄົນໃຫ້ຮູ້ຈັກສິ່ງເຫລົ່ານີ້.
- ທ່ານຈະເຮັດແນວໃດຈຶ່ງຈະມີໂອກາດໄດ້ເວົ້າເຣື່ອງພຣະເຈົ້າໃຫ້ກັບຄອບຄົວຂອງທ່ານຫລາຍຂຶ້ນ?

ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:  (ພຣະບັນຍັດສອງ 6:4-9)

1. ຄວາມຈິງທີ່ພໍ່ແມ່ຄວນຈະເວົ້າກັບລູກ ໆ ນັ້ນແມ່ນຫຍັງ?
2. ຄວນໃຊ້ວິທີການຕິດຕໍ່ພົວພັນແບບໃດຍິ່ງຈະດີ?
3. ທ່ານໄດ້ໃຊ້ວິທີການແບບໃດທີ່ເວົ້າເຣື່ອງພຣະເຈົ້າໃຫ້ກັບຄົນໃນຄອບຄົວຂອງທ່ານຟັງ?
4. ຈະເວົ້າເຣື່ອງພຣະເຈົ້າຫລາຍປານໃດຈຶ່ງຈະພໍ?

## 2. ຕິດຕໍ່ພົວພັນ -ຊີວິດ ແລະການຄຸ້ມຄອງຮັກສາ:  (ສຸພາສິດ 4:3-6)

- ຂໍໃຫ້ນັກຮຽນອາສາສມັກອ່ານ  ພຣະທັມ ສຸພາສິດ 4:3-6
- ທີ່ຜ່ານມາມີຄໍາເວົ້າ ຫລືເຣື່ອງໃດທີ່ເຂົ້າມາໃນຄອບຄົວຂອງທ່ານ?
- ໃນພຣະທັມສຸພາສິດ 4:3-6 ພໍ່**ເປັນຜູ້ສືບ**ຕໍ່ການສິດສອນເຣື່ອງຊີວິດ ແລະການຄຸ້ມຄອງຊີວິດທີ່ພໍ່ຂອງລາວໄດ້ ສອນໃຫ້ລາວ. **ເສີມສ້າງການຕິດຕໍ່ພົວພັນຂອງທ່ານໃຫ້ຊໍານານຄ່ອງແຄ້ວ**
- ຖາມ: ແມ່ນຫຍັງເປັນສິ່ງທີ່ປະເມີນມູນຄ່າຂອງຊີວິດ ແລະການຄຸ້ມຄອງເພື່ອໃຫ້ລູກ ໆ ຂອງພວກເຮົາເຫັນ?

ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:  (ສຸພາສິດ 4:3-6)

1. ຄວາມຈິງອັນໃດທີ່ພໍ່ໄດ້ຮັບມາຈາກພໍ່ຂອງລາວແລ້ວນໍາສືບທອດໃຫ້ແກ່ລູກທັງຫລາຍ?
2. ເປັນດ້ວຍເຫດໃດຈຶ່ງເປັນການສໍາຄັນໃນການໃຫ້ຄໍາສອນໃນສມັຍກ່ອນໃຫ້ຊຶ່ງກັນແລະກັນ?
3. ທ່ານມີຄວາມຕ້ອງການຢາກໃຫ້ລູກຂອງທ່ານຮູ້ຈັກ ແລະຢາກເຫັນເຂົາມີຄວາມສລາດຫລັກແຫລມຢູ່ບໍ່?
4. ເຮັດແນວໃດທ່ານຈຶ່ງຈະສາມາດໃຫ້ຄວາມຮູ້ໃນເຣື່ອງນີ້ແກ່ລູກຂອງທ່ານໄດ້?

## 3. ຕິດຕໍ່ພົວພັນ -ກໍຣະນີການສຶກສາ:  (2 ຊາມູເອນ 14:23-24, 28-33)

- ຂໍໃຫ້ອາສາສມັກອ່ານພຣະທັມ  2 ຊາມູເອນ 14:23-24, 28-33
- ຝຶກຝົນແກ້ໄຂການຕິດຕໍ່ພົວພັນໃຫ້ມີຄວາມຊໍານິຊໍານານ, ສຶກສາໃນບົດຮຽນທີ່ສະແດງໃຫ້ເຫັນຜົນຂອງ ການເມີນເສີຍທີ່ເພພັງຂອງການຕິດຕໍ່ພົວພັນ. ສິ່ງນີ້ເປັນຕົວຢ່າງຂອງການທີ່ບໍ່ທໍາຕາມ. ສົນທະນາກັນວ່າ ການຕິດຕໍ່ພົວພັນໃນທາງນີ້ມີຄວາມໝາຍວ່າແນວໃດ.

- ຄຳຖາມ: ອັບຊາໂລມໄດ້ຜັກດັນພໍ່ຂອງລາວ, ດາວິດ ໃຫ້ຕິດຕໍ່ພົວພັນກັນຢ່າງໃດ?
- ຖ້າຫາກອັບຊາໂລມກັບພໍ່ຂອງລາວໄດ້ມີການຕິດຕໍ່ກັນໃນເລື່ອງຄວາມບາບທີ່ພໍ່ຂອງລາວໄດ້ກະທຳ ແລະແກ້ໄຂໄດ້ຄວາມແຕກຕ່າງຈະເປັນຢ່າງໃດ?
- ບາງຄັ້ງກໍເປັນການຍາກທີ່ສຸດທີ່ຈະສ້າງຄວາມສັມພັນໃນການຕິດຕໍ່ພົວພັນກັນໃນກໍຣະນີນີ້ທີ່ຈະເຮັດໃຫ້ສອງຝ່າຍຄືນດີນຳກັນ.
- ໃຫ້ນັກຮຽນສຳນຶກເຖິງຜູ້ທີ່ເຂົາເຈົ້າຕ້ອງການຕິດຕໍ່ພົວພັນນຳ ແຕ່ເປັນການລຳບາກໃຈຂຶ້ນມາ
- ເປັນຫຍັງຈຶ່ງເກີດມີບັນຫາທີ່ແກ້ບໍ່ຕົກຂຶ້ນໃນບ້ານ?
- ທ່ານໄດ້ເຄີຍທົດລອງຕິດຕໍ່ພົວພັນກັບຄົນນັ້ນຈັກເທື່ອແລ້ວ?
- ທ່ານຈະທົດລອງເບິ່ງຈັກເທື່ອໃນບັນຫານັ້ນ?
- ພຣະເຢຊູຄຣິດໄດ້ຊົງແກ້ໄຂບັນຫານັ້ນຢ່າງໃດ?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> (໒ ຊາມູເອນ 14:23-24, 26-33)

1. ເປັນດ້ວຍເຫດໃດອັບຊາໂລມ ແລະພໍ່ຂອງລາວບໍ່ມີການຕິດຕໍ່ພົວພັນກັນຕັ້ງຫລາຍປີ?
2. ໃນສມັຍນີ້ ແມ່ນຫຍັງທີ່ເປັນຕົ້ນເຫດທີ່ເຮັດໃຫ້ຄອບຄົວມີການຕິດຕໍ່ພົວພັນກັນຍາກ?
3. ສະພາບການຕິດຕໍ່ພົວພັນກັນຍັງຄົງຢູ່ໃນສະພາວະຢ່າງໃດ?
4. ໃນບັນຫາທີ່ມີຄວາມຫຍຸ້ງຍາກໃນຄວາມສັມພັນກັນນັ້ນມີຜົນສະທ້ອນອອກມາແນວໃດ?
5. ເຮັດແນວໃດທ່ານຈະສາມາດເປີດການຕິດຕໍ່ພົວພັນກັບເພື່ອນທີ່ມີຄວາມບາບຕິດຢູ່ໃຫ້ດີຂຶ້ນໄດ້?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ຖ້າຫາກພໍ່ແມ່ຢາກໃຫ້ລູກເລີ້ມຕົ້ນສ້າງຄວາມສັມພັນອັນດີກັບພຣະເຈົ້າ. ເຂົາເຈົ້າຕ້ອງຊອກຫາຊ່ອງທາງພົວພັນກັບພຣະຄຳຂອງພຣະເຈົ້າ.
- ໂດຍການອົບຮົມດ້ວຍຕົວເຂົາເຈົ້າເອງ, ພໍ່ແມ່ສາມາດທີ່ຈະພົວພັນກັບລູກຂອງເຂົາເຈົ້າຕາມທີ່ພຣະເຈົ້າສັນຍາ ແລະຈັດຕຽມໄວ້ໃຫ້.
- ຢ່າໄດ້ປະລະການຕິດຕໍ່ພົວພັນ! ຖ້າທ່ານປະລະ, ຄວາມສັມພັນຈະຈືດຈາງ, ບາງທີກໍອາດຈະນຳໄປເຖິງຄວາມເຈັບປວດ ແລະເສັຽໄປກໍເປັນໄດ້.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )